ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພາຍໃນ

ເລກທີ 02 /ພນ

ນະຄອນຫຼວງວຽງຈັນ, ວັນທີ 14 ກຸມພາ 2017

# ຄຳແນະນຳ

## ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ນາຍົກລັດຖະມົນຕີ ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ

ຮຽນ: ທ່ານລັດຖະມົນຕີ, ຫົວໜ້າອົງການ, ເຈົ້າຄອງນະຄອນຫຼວງ ແລະ ເຈົ້າແຂວງ ໃນທົ່ວປະເທດ.

- ອີງຕາມ ມະຕິຕົກລົງສະບັບເລກທີ 02/ສພຊ, ລົງວັນທີ 8 ມັງກອນ 2016 ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VII ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດ ການເຮັດທົດລອງ ວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ.
- ອີງຕາມ ຂໍ້ຕົກລົງນາຍົກລັດຖະມົນຕີ ວ່າດ້ວຍການສັບຊ້ອນບາງວຽກງານ ຂອງລັດຖະບານ ສະບັບເລກທີ 57/ນຍ, ລົງວັນທີ 22 ກໍລະກົດ 2016 ຊຶ່ງໄດ້ມອບວຽກງານຄົ້ນຄວ້າ-ສັງລວມ, ຕິດຕາມ ແລະ ຊຸກຍູ້ບັນດາອົງການບໍລິຫານແຫ່ງລັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການປະຕິບັດນະໂຍບາຍ ສາມສ້າງ ໃຫ້ກະຊວງພາຍໃນຮັບຜິດຊອບ.
- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016 ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ.

**ລັດຖະມົນຕີ ກະຊວງພາຍໃນ ອອກຄຳແນະນຳ ດັ່ງນີ້ :**

## I. ຈຸດປະສົງ

– ເພື່ອໃຫ້ການຈັດຕັ້ງ ຂັ້ນສູນກາງ ແລະ ທ້ອງຖິ່ນ ຮັບຮູ້, ເຊື່ອມຊຶມ, ເຂົ້າໃຈແຈ້ງຕື່ມກ່ຽວກັບເນື້ອໃນຈິດໃຈ ຂອງຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016 ໃຫ້ເປັນເອກະພາບກັນ ແລະ ສາມາດຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນໃນຂອບເຂດທົ່ວປະເທດ;

– ເພື່ອສືບຕໍ່ຈັດຕັ້ງປະຕິບັດທິດນຳ ສາມສ້າງ ເຂົ້າສູ່ລວງເລິກ, ກວ້າງຂວາງ ແລະ ປາກົດຜົນເປັນຈິງຕາມຄາດໝາຍສູ້ຊົນ ຕາມຄຳສັ່ງດັ່ງກ່າວກຳນົດໄວ້.

## II. ກຳແໜ້ນທັດສະນະຊີ້ນຳ

ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ຕ້ອງກຳແໜ້ນບາງຈຸດສຳຄັນ ດັ່ງນີ້ :

1. ວຽກງານສາມສ້າງ ແມ່ນວຽກຍາວນານ, ມີຄວາມສັບສົນ ແລະ ລະອຽດອ່ອນ, ຊຶ່ງຈຳເປັນຕ້ອງເຮັດຢ່າງມີແຜນການ, ມີບາດກ້າວຕໍ່ເນື່ອງ, ມີຄວາມຮອບຄອບ, ມີວິທະຍາສາດ, ມີການຊີ້ນຳຢ່າງໃກ້ຊິດ ແລະ ເລີ່ມຈາກດ້ານທີ່ຈຳເປັນ ແລະ ມີເງື່ອນໄຂ ເຮັດໄດ້ແລ້ວ ຈຶ່ງສືບຕໍ່ປັບປຸງເສີມຂະຫຍາຍອອກໄປເປັນແຕ່ລະບາດກ້າວ ຢ່າງສົມເຫດສົມຜົນ;

2. ດຳເນີນໄປບົນພື້ນຖານຫຼັກການລວມສູນປະຊາທິປະໄຕຂອງພັກ ແລະ ຫຼັກການລວມສູນເປັນເອ ກະພາບແຫ່ງການຄຸ້ມຄອງລັດ ຕາມລັດຖະທຳມະນູນ ແລະ ກົດໝາຍ;

3. ດຳເນີນໄປຢ່າງຮອບດ້ານ ເປັນຕົ້ນ : ດ້ານການເມືອງ-ແນວຄິດ, ເສດຖະກິດ, ສັງຄົມ-ວັດທະນະທຳ, ການຈັດຕັ້ງກົງຈັກ ແລະ ບຸກຄະລາກອນ, ໂດຍມີການປະສານສົມທົບຢ່າງກົມກຽວ ແລະ ສະໜິດແໜ້ນ ລະຫວ່າງ ຂະແໜງການສາຍຕັ້ງ ກັບ ຄະນະພັກ-ອົງການປົກຄອງທ້ອງຖິ່ນ.

## III. ທິດທາງ

1. ບັນດາກະຊວງ ປະຕິບັດພາລະບົດບາດຄຸ້ມຄອງມະຫາພາກຢ່າງຄົບຖ້ວນ ແລະ ຮັດກຸມ; ພ້ອມກັນນັ້ນ ກໍຄົ້ນຄວ້າ ຫັນເອົາໂຄງການວຽກງານ ແລະ ໜ້າທີ່ວິຊາສະເພາະດ້ານການບໍລິຫານຄຸ້ມຄອງຂອງຂະແໜງການຕົນ ໄປໃຫ້ທ້ອງຖິ່ນຮັບຜິດຊອບ ຕາມລະບຽບການ;

2. ອົງການປົກຄອງທ້ອງຖິ່ນ ເສີມຂະຫຍາຍຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບພາຍໃຕ້ການນຳພາ ຂອງຄະນະພັກຂັ້ນຕົນໃຫ້ສູງຂຶ້ນຕື່ມອີກ ຕໍ່ການປະຕິບັດບັນດາໂຄງການລົງທຶນ ກໍຄືບັນດາໜ້າທີ່ວຽກງານທີ່ໄດ້ຮັບການມອບໝາຍ; ພ້ອມກັນນັ້ນ ກໍຢຶດໝັ້ນໃນການນຳພາລວມສູນປະຊາທິປະໄຕຂອງພັກ ແລະ ຫຼັກ ການລວມສູນເປັນເອກະພາບແຫ່ງການຄຸ້ມຄອງລັດ ຕາມລັດຖະທຳມະນູນ ແລະ ກົດໝາຍ;

3. ເພື່ອເຮັດໃຫ້ການປະຕິບັດວຽກງານສາມສ້າງ ດຳເນີນໄປຢ່າງແຂງແຮງ, ຕໍ່ເນື່ອງ ອົງການປົກ ຄອງທ້ອງຖິ່ນຕ້ອງໄດ້ຈັດສັນເອົາບັນດາໂຄງການລົງທຶນ ແລະ ໜ້າທີ່ວຽກງານວິຊາສະເພາະປະຈຳປີ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຕ່ລະປີ.

## IV. ເປົ້າໝາຍ ແລະ ຄາດໝາຍສູ້ຊົນ

ການສືບຕໍ່ຜັນຂະຫຍາຍວຽກງານສາມສ້າງ ເຂົ້າສູ່ລວງເລິກ ແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງທຸກກະຊວງ, ອົງການ ໃນລະບົບການເມືອງທັງຂັ້ນສູນກາງ ແລະ ທ້ອງຖິ່ນ.

1. **ຂັ້ນສູນກາງ** ແມ່ນທຸກໆ ກະຊວງ, ອົງການ ທີ່ມີໜ້າທີ່ປະຕິບັດມະຕິ, ຄຳສັ່ງ ກ່ຽວກັບການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ.

2. **ຂັ້ນແຂວງ** ແມ່ນ ນະຄອນຫຼວງວຽງຈັນ ແລະ ທຸກໆ ແຂວງ ປະຕິບັດໃຫ້ໄດ້ຄົບເນື້ອໃນ 7 ດ້ານ ແລະ ໃຫ້ບັນລຸເປົ້າໝາຍ ຢ່າງໜ້ອຍ 5-10 ແຂວງ ໃນປີ 2020;

3. **ຂັ້ນເມືອງ** ແມ່ນ ທຸກໆ ເມືອງ ໂດຍແຕ່ລະແຂວງ ມີຈຸດສຸມໃສ່ສ້າງເມືອງເຂັ້ມແຂງຮອບດ້ານ ໃຫ້ໄດ້ຄົບເນື້ອໃນ 5 ດ້ານ ແລະ ໃຫ້ບັນລຸເປົ້າໝາຍ ຢ່າງໜ້ອຍໃຫ້ໄດ້ ແຂວງລະ 2-5 ເມືອງ ໃນປີ 2020.

4. **ຂັ້ນບ້ານ** ແມ່ນ ໃຫ້ຜັນຂະຫຍາຍຈາກບົດຮຽນທີ່ໄດ້ດຳເນີນການເຮັດທົດລອງຢູ່ 109 ບ້ານ ຈັດຕັ້ງປະຕິບັດຕາມ 4 ດ້ານຂອງບ້ານໃນຕົວເມືອງແລ້ວ ຄັດເລືອກເອົາບ້ານທີ່ມີເງື່ອນໄຂ ເພື່ອເປັນຈຸດສຸມ ຄື :

1) ຕ້ອງເປັນບ້ານທີ່ມີເງື່ອນໄຂຄົບຖ້ວນ ແລະ ບ້ານເປົ້າໝາຍລຶບລ້າງຄວາມທຸກຍາກເຂົ້າເປັນບຸລິມະສິດ ຕົ້ນຕໍ ໃນການສ້າງບ້ານເປັນບ້ານພັດທະນາ ແຕ່ຕ້ອງມີຈຸດສຸມ;
2) ຕ້ອງເປັນບ້ານທີ່ຈະສ້າງເປັນຕົວເມືອງ ແລະ ນອນຢູ່ໃນຈຸດສຸມທີ່ລັດຖະບານໄດ້ຮັບຮອງເອົາແລ້ວ;
3) ຕ້ອງເປັນບ້ານທີ່ມີເງື່ອນໄຂສະດວກດ້ານການໄປ-ມາ ທັງສອງລະດູ ແລະ ມີພື້ນຖານໂຄງລ່າງຮອງ ຮັບໃຫ້ແກ່ການຜະລິດ ແລະ ປັບປຸງຊີວິດການເປັນຢູ່ໂດຍພື້ນຖານ;
ເພື່ອສ້າງບ້ານພັດທະນາ ຢ່າງໜ້ອຍໃຫ້ໄດ້ 2/3 ຂອງຈຳນວນບ້ານໃນແຕ່ລະເມືອງ ໃນປີ 2020.

## V. ເນື້ອໃນ

1. ອີງໃສ່ 5 ພາລະບົດບາດຄຸ້ມຄອງມະຫາພາກດັ່ງທີ່ໄດ້ກຳນົດໄວ້ໃນມະຕິຕົກລົງກົມການເມືອງສູນ ກາງພັກ ສະບັບເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012 ແລະ ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016 ບັນດາກະຊວງ ຕ້ອງຄົ້ນຄວ້າ ກວດກາ ແລະ ປະເມີນຜົນຄືນ ການມອບສິດ ໃນການແກ້ໄຂ ແລະ ການມອບຄວາມຮັບຜິດຊອບໃນການຄຸ້ມຄອງ, ຈັດຕັ້ງປະຕິບັດບັນດາວຽກງານວິຊາສະເພາະ ຂອງຂະແໜງການກໍຄືບັນດາໂຄງການພັດທະນາ (ທັງງົບປະມານ ແລະ ບຸກຄະລາກອນ) ໃຫ້ແກ່ທ້ອງຖິ່ນ (ແຂວງ, ເມືອງ) ໂດຍຕິດພັນກັບການຈັດສັນ-ແບ່ງປັນຜົນປະໂຫຍດ ໃນໄລຍະດຳເນີນການທົດລອງຜ່ານມານັ້ນ ເພື່ອຊອກ ໃຫ້ເຫັນໄດ້ດ້ານຕັ້ງໜ້າທີ່ຈະຕ້ອງເສີມຂະຫຍາຍ ແລະ ອັນຄົງຄ້າງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງ ແກ້ໄຂໃຫ້ເໝາະສົມ.

2. ການຄົ້ນຄວ້າ, ຜັນຂະຫຍາຍ ທິດທາງ ແລະ ມາດຕະການ ໃນການສ້າງນະຄອນຫຼວງວຽງຈັນ ແລະ ບັນດາແຂວງເປັນຫົວໜ່ວຍຍຸດທະສາດ ໃຫ້ເປັນແຜນປະຕິບັດລະອຽດໃນແຕ່ລະປີຂອງອົງການປົກຄອງຂັ້ນ ແຂວງ ແມ່ນໃຫ້ອີງໃສ່ເນື້ອໃນ 7 ດ້ານຂອງທິດທາງ ແລະ ເປົ້າໝາຍ ທີ່ໄດ້ກຳນົດໄວ້ໃນມະຕິ ເລກທີ 25/ກມສພ, ລົງວັນທີ 22 ທັນວາ 2014 ແລະ ຄຳສັ່ງນາຍົກລັດຖະມົນຕີ ເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016.

3. ການຄົ້ນຄວ້າ, ຜັນຂະຫຍາຍ ທິດທາງ ແລະ ມາດຕະການ ໃນການສ້າງເມືອງເປັນຫົວໜ່ວຍ ເຂັ້ມແຂງຮອບດ້ານ ໃຫ້ເປັນແຜນປະຕິບັດລະອຽດໃນແຕ່ລະປີ ຂອງອົງການປົກຄອງຂັ້ນເມືອງ ແມ່ນໃຫ້ອີງໃສ່ ເນື້ອໃນ 5 ດ້ານ ຂອງທິດທາງ ແລະ ເປົ້າໝາຍ ໄດ້ກຳນົດໄວ້ໃນມະຕິ 25/ກມສພ, ລົງວັນທີ 22 ທັນວາ 2014, ຄຳສັ່ງນາຍົກລັດຖະມົນຕີ ເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016 ແລະ ບົນພື້ນຖານບົດຮຽນຈາກປະສົບ ການຕົວຈິງ ຈາກເມືອງເປົ້າໝາຍທົດລອງສາມສ້າງຜ່ານມາ ເພື່ອສ້າງເມືອງເປົ້າໝາຍໃຫ້ກາຍເປັນຫົວໜ່ວຍເຂັ້ມ ແຂງຮອບດ້ານໄດ້ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ ໃນໄລຍະອັນເໝາະສົມ; ພ້ອມທັງຄົ້ນຄ້ວາ ແລະ ຕົກ ລົງເອົາເມືອງອື່ນໆ ເຂົ້າໃນເປົ້າໝາຍຕື່ມອີກ.

4. ການຄົ້ນຄວ້າ, ຜັນຂະຫຍາຍ ທິດທາງ ແລະ ມາດຕະການໃນການສ້າງບ້ານເປັນຫົວໜ່ວຍ ພັດທະນາ ໃຫ້ເປັນແຜນປະຕິບັດລະອຽດ ຂອງອົງການປົກຄອງຂັ້ນເມືອງ ແມ່ນໃຫ້ອີງໃສ່ເນື້ອໃນ 4 ດ້ານ ຂອງທິດ ທາງ ແລະ ເປົ້າໝາຍ ໄດ້ກຳນົດໄວ້ໃນຄຳສັ່ງເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016 ແລະ ບົນພື້ນຖານປະ ເມີນຄືນໃໝ່ການປະກາດບ້ານພັດທະນາ ແລະ ການເຮັດທົດລອງສ້າງບ້ານພັດທະນາໃນໄລຍະຜ່ານມາ ເພື່ອໃຫ້ ຮັບປະກັນໄດ້ຄຸນນະພາບ ແລະ ປະສິດທິຜົນ ສອດຄ່ອງກັບເນື້ອໃນເປົ້າໝາຍ 4 ດ້ານ ຂອງທິດທາງ ແລະ ເປົ້າ ໝາຍດັ່ງກ່າວເທິງນີ້; ພ້ອມກັນນີ້ ກໍໃຫ້ສືບຕໍ່ຄົ້ນຄວ້າກຳນົດບ້ານເປົ້າໝາຍຈຸດສຸມ ເພື່ອສ້າງເປັນບ້ານພັດທະນາໃນ ຕໍ່ໜ້າ ໂດຍອີງໃສ່ບ້ານທີ່ມີເງື່ອນໄຂໃນແຕ່ລະເມືອງ.

5. ການໂຮມບ້ານນ້ອຍເປັນບ້ານໃຫຍ່ ແລະ ສ້າງບ້ານໃຫຍ່ໃຫ້ເປັນຕົວເມືອງໃນຊົນນະບົດ ແມ່ນ ໃຫ້ດຳເນີນໄປຕາມທິດນຳ ທີ່ຄຳສັ່ງແນະນຳ ເລກທີ 03/ກມສພ, ລົງວັນທີ 30 ພຶດສະພາ 2011 ໄດ້ກຳນົດໄວ້ ດັ່ງນີ້ :

1) **ການໂຮມບ້ານນ້ອຍເປັນບ້ານໃຫຍ່**, ໃນຂະບວນວິວັດແຫ່ງການສ້າງບ້ານພັດທະນານັ້ນ ຢູ່ບາງເຂດ-ບາງບໍລິເວນ ຈະມີຄວາມຈໍາເປັນໂຮມເອົາບ້ານທີ່ຢູ່ໃກ້ກັນ ຈໍານວນໜຶ່ງ ເຂົ້າເປັນບ້ານດຽວ ເພື່ອສະດວກໃນການຂະຫຍາຍ ແລະ ນໍາໃຊ້ພື້ນຖານໂຄງລ່າງຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ ເຊັ່ນ : ລະບົບຊົນລະປະທານ, ຫົນທາງ, ໄຟຟ້າ, ນໍ້າລິນ-ນໍ້າສະອາດ; ໂຮງຮຽນ, ສຸກສາລາ ແລະ ອື່ນໆ, ຊຶ່ງຈະເຮັດໃຫ້ບໍລິເວນເຂດແຄວ້ນນັ້ນມີການຂະຫຍາຍຕົວ. ບ້ານທີ່ໂຮມເຂົ້າກັນຈະເປັນບ້ານໃຫຍ່ ແລະ ເປັນໃຈກາງທາງດ້ານການປົກຄອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ດ້ານອື່ນໆ.

ໃຫ້ນະຄອນຫຼວງ, ບັນດາແຂວງ ແລະ ບັນດາເມືອງ ກວດກາຄືນ ການໂຮມບ້ານໃຫ້ເປັນບ້ານໃຫຍ່ໃນໄລຍະຜ່ານມາ ເພື່ອປັບປຸງໃຫ້ຖືກຕາມທິດນໍາດັ່ງກ່າວເທິງນີ້;

2) **ການສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງໃນຊົນນະບົດ**, ຕ້ອງມີການສຶກສາຄົ້ນຄວ້າຢ່າງຮອບດ້ານ, ຈະເອົາບ້ານໃດ ເປັນຈຸດໃຈກາງສໍາລັບເຕົ້າໂຮມ ເພື່ອໃຫ້ສາມາດເສີມຂະຫຍາຍທ່າແຮງຂອງບໍລິເວນເຂດແຄວ້ນນັ້ນເຂົ້າໃນການພັດທະນາຢ່າງມີປະສິດທິຜົນ, ຫຼີກເວັ້ນການແລ່ນນໍາຕົວເລກຄາດໝາຍ, ຕ້ອງມີການປຸກລະດົມ ຂົນຂວາຍຢ່າງມີວິທະຍາສາດໃຫ້ປະຊາຊົນເຂົ້າໃຈ ຈາກນັ້ນເຂົາເຈົ້າເປັນຜູ້ຕື່ນຕົວ ສະມັກໃຈເຕົ້າໂຮມ, ພາຍຫຼັງ ການເຕົ້າໂຮມຕ້ອງຮັບປະກັນການຄຸ້ມຄອງການພັດທະນາດີຂຶ້ນກວ່າເກົ່າ.

ບ້ານທີ່ເປັນໃຈກາງນັ້ນ ຕ້ອງເປັນບ້ານພັດທະນາຕາມ 4 ຄາດໝາຍທີ່ໄດ້ກໍານົດໄວ້, ທັງຕ້ອງມີເງື່ອນໄຂທາງດ້ານທີ່ຕັ້ງພູມສາດ ກໍຄືດ້ານພື້ນຖານໂຄງລ່າງທາງດ້ານເສດຖະກິດ, ວັດຖຸ-ເຕັກນິກ, ວັດທະນະທໍາ ແລະດ້ານອື່ນໆ ສໍາລັບການເປັນຕົວເມືອງ ເຊັ່ນ : ມີຖະໜົນຫົນທາງໄປ-ມາສະດວກ, ເຊື່ອມຈອດເຖິງເມືອງ ແລະ ບ້ານອື່ນໆ; ມີພື້ນຖານການຜະລິດ ແລະ ປຸງແຕ່ງເປັນສິນຄ້າທີ່ໝັ້ນຄົງ, ມີຕະຫຼາດ, ມີໂຮງຮຽນປະຖົມ ແລະມັດທະຍົມສົມບູນ, ມີສຸກສາລາ ຫຼື ໂຮງໝໍນ້ອຍ, ມີສະໂມສອນ ຫຼື ຫໍວັດທະນະທໍາ ຂອງບ້ານ, ມີຫ້ອງສະໝຸດ ແລະ ຫ້ອງອ່ານໜັງສື, ມີບ່ອນຫຼິ້ນກິລາບາງປະເພດ ແລະ ມີສະຖານທີ່ສາທາລະນະ...

ບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດພູດອຍ ຢ່າງໜ້ອຍມີພົນລະເມືອງແຕ່ ໜຶ່ງພັນຄົນຂຶ້ນໄປ; ສ່ວນຢູ່ຊົນນະບົດທົ່ງພຽງ ຢ່າງໜ້ອຍມີພົນລະເມືອງແຕ່ ສາມພັນຄົນຂຶ້ນໄປ. ຄາດໝາຍສູ້ຊົນລວມແຕ່ນີ້ຮອດປີ 2020, **ເມືອງຕ້ອງສູ້ຊົນສ້າງບ້ານໃຫຍ່ໃຫ້ເປັນຕົວເມືອງໃນຊົນນະບົດໃຫ້ໄດ້ຢ່າງໜ້ອຍ** ເມືອງລະ 1-2 ແຫ່ງ ລວມທົ່ວປະເທດ ບໍ່ໃຫ້ຫຼຸດ 213 ແຫ່ງ.

## VI. ໜ້າທີ່ຮັບຜິດຊອບ

### 6.1 ຂັ້ນສູນກາງ

- ໃຫ້ບັນດາກະຊວງ, ອົງການ ກວດຄືນດໍາລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງຕົນ ເພື່ອສະເໜີປັບປຸງຄືນໃໝ່ ໃຫ້ແທດເໝາະກັບວຽກງານຕົວຈິງ ຕາມທິດສາມສ້າງ;
- ກວດຄືນ ບັນດານິຕິກາ ແລະ ກົນໄກທີ່ມີຄວາມຈໍາເປັນຕ້ອງໄດ້ດັດແກ້ ເພື່ອອໍານວຍເງື່ອນໄຂໃຫ້ແກ່ການຈັດຕັ້ງປະຕິບັດຄໍາສັ່ງນາຍົກລັດຖະມົນຕີ ເປັນຕົ້ນແມ່ນ ບັນດານິຕິກໍາທີ່ກະຊວງ ແລະ ອົງການອອກຮັບໃຊ້ວຽກງານສາມສ້າງ ໃນໄລຍະເຮັດທົດລອງ, ຜ່ານການຈັດຕັ້ງປະຕິບັດວຽກງານຕົວຈິງ ຫາກເຫັນວ່າ ນິຕິກໍາໃດ ຂໍ້ກໍານົດໃດບໍ່ເໝາະສົມ ແລະ ບໍ່ສອດຄ່ອງ ກໍໃຫ້ປັບປຸງຄືນ. ພ້ອມກັນນັ້ນ ກໍໃຫ້ຄົ້ນຄວ້າສ້າງນິຕິກໍາ, ລະບຽບການ ແລະ ກົນໄກອັນໃໝ່ອອກເພີ່ມເຕີມ ເພື່ອໃຫ້ການຈັດຕັ້ງປະຕິບັດຄໍາສັ່ງດັ່ງກ່າວດໍາເນີນໄປໄດ້ດີ ແລະ ມີປະສິດທິຜົນ;

- ກະຊວງ, ອົງການ ຕ້ອງກຳນົດມາດຕະຖານ ແຂວງເປັນຫົວໜ່ວຍຍຸດທະສາດ ແລະ ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານຂອງຂະແໜງການ ແລະ ສົ່ງໃຫ້ຂະແໜງການຕົນຢູ່ທ້ອງຖິ່ນ ແລະ ກະຊວງພາຍໃນ, ໂດຍອີງໃສ່ ເນື້ອໃນທີ່ກ່ຽວຂ້ອງຂອງຂະແໜງການຕົນ ທີ່ໄດ້ກຳນົດໄວ້ໃນມະຕິ 25/ກມສພ, ລົງວັນທີ 22 ທັນ ວາ 2014;

- ກະຊວງ, ອົງການ ລົງຊ່ວຍເຫຼືອແຂວງ, ນະຄອນຫຼວງ ທາງດ້ານວິຊາການໃນການຄົ້ນຄວ້າ, ຜັນຂະຫຍາຍ ທິດທາງ ແລະ ມາດຕະການໃນການສ້າງແຂວງ, ນະຄອນຫຼວງ ໃຫ້ເປັນຫົວໜ່ວຍຍຸດທະສາດ ໃນໄລຍະ 5 ປີ ຕໍ່ໜ້າ ແລະ ຮອດປີ 2025, 2030 ເພື່ອເປັນທິດໃຫ້ແຂວງ ແລະ ນະຄອນຫຼວງ ໃນການຄົ້ນຄວ້າ ວາງແຜນຍຸດທະສາດ ແລະ ຈະເອົາຍຸດທະສາດດ້ານໃດເປັນບຸລິມະສິດຕົ້ນຕໍ ແລະ ສຳຮອງ ໂດຍອີງໃສ່ຈຸດພິເສດ ແລະ ທ່າແຮງຂອງຕົນ;

- ກະຊວງ, ອົງການ ໃນຖານະເປັນຜູ້ຄຸ້ມຄອງມະຫາພາກແມ່ນໃຫ້ເລັ່ງໃສ່ປະຕິບັດວຽກງານທີ່ເປັນມະຫາພາກເທົ່ານັ້ນ ສ່ວນວຽກງານຈຸລະພາກແມ່ນມອບໃຫ້ທ້ອງຖິ່ນເປັນຜູ້ຈັດຕັ້ງປະຕິບັດ, ສູນກາງມີໜ້າທີ່ຊີ້ນຳ, ໃຫ້ການປຶກສາແນະນຳ ແລະ ຊ່ວຍເຫຼືອທາງດ້ານວິຊາການ;

- ກະຊວງ, ອົງການ ຊີ້ນຳພະແນກວິຊາການຢູ່ຂັ້ນແຂວງ ໃຫ້ສ້າງແຜນການ ແລະ ງົບປະມານປະຈຳປີ ຂອງຕົນ ກວມເອົາສະເພາະວຽກ, ໂຄງການ ແລະ ງົບປະມານທີ່ຕົນຮັບຜິດຊອບຈັດຕັ້ງປະຕິບັດໂດຍກົງເທົ່ານັ້ນ.

6.2 ຂັ້ນທ້ອງຖິ່ນ

6.2.1 ອົງການປົກຄອງຂັ້ນແຂວງ

- ບັນດາຂະແໜງການທີ່ເປັນກອງເລຂາສາມສ້າງຂອງຂັ້ນແຂວງໃນເມື່ອກ່ອນ ໃຫ້ມອບໂອນວຽກງານ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນໃຫ້ພະແນກພາຍໃນເປັນຜູ້ດຳເນີນການແທນ;

- ບັນດາແຂວງ, ນະຄອນຫຼວງ ຄົ້ນຄວ້າສ້າງແຜນຜັນຂະຫຍາຍລະອຽດອອກສູ່ເມືອງອື່ນຢ່າງມີຈຸດສຸມໂດຍອີງໃສ່ຈຸດພິເສດ ແລະ ທ່າແຮງຂອງຕົນ;

- ບັນດາແຂວງ, ນະຄອນຫຼວງ ລົງສົມທົບກັບເມືອງ ໃນການຄົ້ນຄວ້າ ແລະ ຜັນຂະຫຍາຍການສ້າງເມືອງໃຫ້ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ໃຫ້ສຸມໃສ່ເມືອງທີ່ມີເງື່ອນໄຂກ່ອນເພື່ອໃຫ້ສາມາດສ້າງເມືອງເຂັ້ມແຂງຮອບດ້ານໄດ້ຢ່າງໜ້ອຍ 2-5 ເມືອງ ໃນປີ 2020;

- ການຂຶ້ນແຜນງົບປະມານຮັບໃຊ້ວຽກງານສາມສ້າງຂອງບັນດາແຂວງ, ນະຄອນຫຼວງ ແມ່ນໃຫ້ຂຶ້ນໃສ່ແຜນປົກກະຕິປະຈຳປີ ຂອງຕົນ.

6.2.2 ອົງການປົກຄອງຂັ້ນເມືອງ

- ບັນດາຂະແໜງການທີ່ເປັນກອງເລຂາສາມສ້າງຂອງຂັ້ນເມືອງ ໃຫ້ມອບໂອນວຽກງານ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນໃຫ້ຫ້ອງການພາຍໃນເມືອງເປັນຜູ້ດຳເນີນການແທນ;

- ເມືອງຄົ້ນຄວ້າ, ກຳນົດບ້ານເປົ້າໝາຍສ້າງເປັນບ້ານພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ ໃຫ້ກຳນົດເອົາບ້ານທີ່ມີເງື່ອນໄຂເໝາະສົມກວ່າໝູ່ ເພື່ອສູ້ຊົນໃຫ້ບັນລຸຄາດໝາຍ;

- ເມືອງສືບຕໍ່ຄົ້ນຄວ້າປັບປຸງການໂຮມບ້ານນ້ອຍເປັນບ້ານໃຫຍ່ ແລະ ສ້າງບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດ ໂດຍການມອບວຽກນີ້ໃຫ້ຫ້ອງການພາຍໃນເມືອງເປັນເສນາທິການໃຫ້ເຈົ້າເມືອງ;

- ການຂຶ້ນແຜນງົບປະມານຮັບໃຊ້ວຽກງານສາມສ້າງຂອງບັນດາເມືອງແມ່ນໃຫ້ຂຶ້ນໃສ່ແຜນປົກກະຕິປະຈຳປີ ຂອງຕົນ.

6.2.3 ອົງການປົກຄອງບ້ານ

ບົນພື້ນຖານວຽກງານ, ໜ້າທີ່ຮັບຜິດຊອບ, ສິດຕັດສິນບັນຫາຜົນປະໂຫຍດທີ່ໄດ້ຮັບການແບ່ງປັນ ແລະ ພາຍໃຕ້ການຊີ້ນຳນຳພາຂອງອົງການປົກຄອງເມືອງ ອົງການປົກຄອງບ້ານດຳເນີນການປັບປຸງລະບຽບ, ທົບທວນຄືນກົງຈັກ, ບຸກຄະລາກອນໃນໂຄງປະກອບການຈັດຕັ້ງຂອງຕົນໃຫ້ມີຄວາມກະທັດຮັດ ສົມເຫດສົມຜົນ, ສອດຄ່ອງກັບ

ຂໍ້ຕົກລົງລັດຖະມົນຕີກະຊວງພາຍໃນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການປົກຄອງບ້ານ ໂດຍການປັບປຸງອົງການປົກຄອງບ້ານໃຫ້ມີ 5 ໜ່ວຍງານ ແລະ ຈຳນວນບຸກຄະລາກອນຂອງອົງການປົກຄອງບ້ານ ແມ່ນສູງສຸດບໍ່ໃຫ້ກາຍ 15 ຄົນ.

## VII. ການພົວພັນປະສານງານ

### 1. ຂັ້ນກະຊວງ

ແຕ່ລະກະຊວງ, ອົງການ ໃຫ້ຄົ້ນຄວ້າ, ຕົກລົງ, ກຳນົດເອົາຫ້ອງການ ເປັນຈຸດປະສານຂອງຕົນກ່ຽວກັບວຽກນີ້;

ກະຊວງພາຍໃນ ເຮັດໜ້າທີ່ຄົ້ນຄວ້າສັງລວມ, ສະຫຼຸບ, ລາຍງານ ວຽກງານສາມສ້າງ ໃຫ້ຂັ້ນເທິງເປັນແຕ່ລະໄລຍະ ແລະ ເປັນໃຈກາງໃນການພົວພັນປະສານງານ ຂອງບັນດາກະຊວງ, ອົງການ, ແຂວງ ແລະ ນະຄອນຫຼວງ.

### 2. ຂັ້ນແຂວງ

ພະແນກພາຍໃນ ເຮັດໜ້າທີ່ພົວພັນປະສານງານກັບຂະແໜງການທີ່ກ່ຽວຂ້ອງຂອງຕົນ ແລະ ຄົ້ນຄວ້າສັງລວມສະຫຼຸບ, ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016 ແລະ ຄຳແນະນຳ ສະບັບນີ້ ແລ້ວລາຍງານໃຫ້ກະຊວງພາຍໃນຊາບເປັນປົກກະຕິ. ພະແນກການຕ່າງໆ ຂັ້ນແຂວງ ເຮັດໜ້າທີ່ຄົ້ນຄວ້າສັງລວມ, ສະຫຼຸບ, ລາຍງານຄວາມຄືບໜ້າໃນການຜັນຂະຫຍາຍວຽກງານສາມສ້າງ ຂອງຂະແໜງການຕົນ ໃຫ້ກະຊວງ ແລະ ພະແນກພາຍໃນ.

### 3. ຂັ້ນເມືອງ

ຫ້ອງການພາຍໃນ ເຮັດໜ້າທີ່ພົວພັນປະສານງານກັບຂະແໜງການທີ່ກ່ຽວຂ້ອງ ຂອງຂັ້ນເມືອງ ແລະ ຄົ້ນຄວ້າ ສັງລວມ, ສະຫຼຸບ, ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016 ແລະ ຄຳແນະນຳ ສະບັບນີ້ ແລ້ວລາຍງານໃຫ້ພະແນກພາຍໃນຊາບເປັນປົກກະຕິ. ຫ້ອງການຂັ້ນເມືອງ ເຮັດໜ້າທີ່ຄົ້ນຄວ້າສັງລວມ, ສະຫຼຸບ, ລາຍງານຄວາມຄືບໜ້າໃນການຜັນຂະຫຍາຍວຽກງານສາມສ້າງ ຂອງຂະແໜງການຕົນ ໃຫ້ພະແນກຂັ້ນແຂວງ ຂອງຕົນ ແລະ ຫ້ອງການພາຍໃນເມືອງ.

### 4. ຂັ້ນບ້ານ

ອົງການປົກຄອງບ້ານມີການພົວພັນ ແລະ ປະສານງານກັບການຈັດຕັ້ງທີ່ກ່ຽວຂ້ອງໃນການເຄື່ອນໄຫວວຽກງານ; ໃນກໍລະນີບໍ່ເອກະພາບກັນໃນເລື່ອງໃດໜຶ່ງ ໃຫ້ນຳສະເໜີອົງການຈັດຕັ້ງຂັ້ນເທິງຖັດຕົນ ເພື່ອພິຈາລະນາຕົກລົງ.

## VIII. ການຈັດຕັ້ງປະຕິບັດ

1. ໃຫ້ກະຊວງ, ອົງການ, ແຂວງ, ນະຄອນຫຼວງວຽງຈັນ, ບັນດາເມືອງ ແລະ ບ້ານ ຖືເອົາວຽກງານສາມສ້າງ ເປັນໜ້າທີ່ລວມ ແລະ ເປັນວຽກບູລິມະສິດໜຶ່ງຂອງຕົນ;

2. ວຽກງານສາມສ້າງ ໃຫ້ຖືເປັນວຽກປົກກະຕິຂອງຂະແໜງການ, ການຂຶ້ນແຜນງົບປະມານແມ່ນໃຫ້ຂຶ້ນໃສ່ແຜນປົກກະຕິປະຈຳປີຂອງຕົນ ແລະ ການຂຶ້ນແຜນວຽກງານຕ້ອງສະແດງອອກໃຫ້ເຫັນຢ່າງຈະແຈ້ງຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ;

3. ໃຫ້ບັນດາກະຊວງ, ອົງການປົກຄອງທ້ອງຖິ່ນ ຈັດຕັ້ງເຜີຍແຜ່ ເຊື່ອມຊຶມມະຕິກົມການເມືອງສູນກາງພັກສະບັບເລກທີ 25/ກມສພ, ລົງວັນທີ 22 ທັນວາ 2014; ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016 ໄປຄຽງຄູ່ກັບການຖອດຖອນບົດຮຽນໃນການເຮັດທົດລອງວຽກງານສາມສ້າງ ໃນໄລຍະຜ່ານມາ ບົນພື້ນຖານກຳແໜ້ນທັດສະນະຂອງພັກດັ່ງທີ່ໄດ້ລະບຸໄວ້ໃນມະຕິ 03/ກມສພ, ລົງວັນທີ 15 ກຸມພາ

2012 ແລະ ຄຳສັ່ງແນະນຳສະບັບເລກທີ 11/ຄລສພ, ລົງວັນທີ 28 ມີນາ 2012 ແລະ ຄຳສັ່ງ, ຄຳແນະນຳອື່ນໆ ທີ່ກ່ຽວຂ້ອງ.

4. ໃຫ້ບັນດາກະຊວງ, ອົງການ, ແຂວງ, ນະຄອນຫຼວງ, ບັນດາເມືອງ ແລະ ບ້ານ ລາຍງານຄວາມຄືບໜ້າໃນການຈັດຕັ້ງຜັນຂະຫຍາຍຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 34/ນຍ, ລົງວັນທີ 23 ສິງຫາ 2016 ແລະ ຄຳແນະນຳສະບັບນີ້ ໃຫ້ຂັ້ນເທິງຂອງຕົນ ແລະ ກະຊວງພາຍໃນ ເປັນແຕ່ລະໄລຍະ 3 ເດືອນ, 6 ເດືອນ, 1 ປີຜ່ານການຈັດຕັ້ງປະຕິບັດຕົວຈິງ ມີບັນຫາໃດທີ່ຫຍຸ້ງຍາກ ແລະ ສັບສົນ ໃຫ້ປະສານສົມທົບກັບ ຂັ້ນເທິງຖັດຕົນເພື່ອພິຈາລະນາແກ້ໄຂໃຫ້ທັນເວລາ.

5. ກຳນົດເວລາສ້າງແຜນການຜັນຂະຫຍາຍຂອງບັນດາກະຊວງ, ອົງການ, ແຂວງ, ນະຄອນຫຼວງວຽງຈັນ ໃຫ້ສຳເລັດພາຍໃນເດືອນ ເມສາ 2017 ນີ້.

**ລັດຖະມົນຕີ**

ກະຊວງພາຍໃນ ລັດຖະມົນຕີ

ຄຳໝັ້ນ ສູນວິເລີດ